# ເປັນຫຍັງຈຶ່ງເລືອກໂຮງຮຽນມັທຍົມຫຼວງ

## Information for parents and carers





ໂຮງຮຽນມັທຍົມຫຼວງກະກຽມເຍົາວະຊົນໃຫ້ນໍາພາຊີວິດໃນການກ້າວໄປເປັນຜູ້ໃຫຍ່ດ້ວຍຄວາມອຸດົມ ສົມບູນແລະຄວາມພໍໃຈ ພ້ອມທັງສາມາດ ຈັດການ ກັບສິ່ງ ທ້າທາຍຕ່າງໆທີ່ມີໃນໂລກສມັຍໃໝ່ນີ້.

### ການສອນ ແລະ ການຮຽນ ທີ່ມີຄຸນນະພາບ

ບັນດາໂຮງຮຽນທີ່ຢູ່ພາຍໃນຣະບົບການສຶກສາຫຼວງ ຂອງຣັດNSW ໃຊ້ຣະບົບ NSW Quality Teaching Framework (ຣະບົບທີ່ໃຊ້ ວິທີ ການສອນ ການຮຽນ ແລະ ການປະເມີນ ຊຶ່ງຊ່ວຍ ເຮັດໃຫ້ຜົນການຮຽນດີຂຶ້ນສໍາລັບ ນັກຮຽນ)ເພື່ອສນອງ ໃຫ້ມີການສອນແລະການ ຮຽນທີ່ລັກສນະດຶງດູດ, ເໝາະສົມແລະທ້າທາຍ. ພວກນາຍຄູຂອງພວກເຮົາ ໄດ້ຜ່ານການເຝິກ ຫັດມາຢ່າງດີ ແລະ ມີຄຸນວຸດທິຂັ້ນອຸດົມສຶກສາ. ນອກຈາກນີ້ ໂຮງຮຽນຂອງພວກເຮົາ ກໍຍັງມີຜູ້ ໃຫ້ຄໍາປຶກສາສະເພາະຊຶ່ງຈະໃຫ້ຄໍາແນະນໍາ ແລະ ການເຝິກຫັດແກ່ບັນດານາຍຄູຢ່າງສມໍ່າສເມີ ເພື່ອ ໃຫ້ແນ່ໃຈວ່າ ການສອນແລະການຮຽນຢູ່ໃນ ຫ້ອງຮຽນຂອງພວກເຮົາຢູ່ໃນຂັ້ນມາຕຖານສູງສຸດ.

### ຫຼັກສູດການຮຽນທີ່ໃຫ້ໂອກາດຢ່າງຫຼວງຫຼາຍ

ໂຮງຮຽນມັທຍົມຫຼວງຂອງຣັດNSW ມີວິຊາຮຽນໃຫ້ ຢ່າງກວ້າງຂວາງ ທັງໃຫ້ໂອກາດແລະຄວາມຊໍານານ ອີກດ້ວຍ. ດ້ວຍການມີໂອກາດຜ່ານການສຶກສາວິຊາ ຊີບແລະການເຝິກຫັດ ບັນດານັກຮຽນຂອງພວກເຮົາ ບໍ່ພຽງແຕ່ຈະໄດ້ຮຽນວິຊາຕ່າງໆອັນຫຼວງຫຼາຍ ຂອງ ທາງໂຮງຮຽນເທົ່ານັ້ນ ພວກເຂົາເຈົ້າຍັງຈະໄດ້ຮຽນ ວິຊາອື່ນໆທີ່ສອນຮ່ວມກັບສະຖາບັນ TAFE ອີກດ້ວຍ. ນັກຮຽນຣຸ່ນໃຫຍ່ຍັງສາມາດຮຽນວິຊາຂອງ ຂັ້ນ ມະຫາວິທຍາລັຍທີ່ເຊື່ອມຕໍ່ໃສ່ HSC (ໃບປະກາສ ນີຍາບັດໄດ້ຮັບໃນການຈົບການສຶກສາຕາມວິຊາທີ່ກໍາ ນົດ ໄວ້ໃນປີ11 ແລະ ປີ12). ຫຼາຍໂຮງຮຽນຢູ່ຕາມ ເຂດຊົນນະບົດ ແລະ ເຂດນອກຕົວເມືອງໃຊ້ຣະບົບເຊື່ອ ມຕໍ່ທາງຄອມພິວເຕີ໌ ເພື່ອໃຫ້ມີວິຊາເພີ້ມຂຶ້ນອີກ.

### ຄຸນຄ່າອັນສູງ

ໂຮງຮຽນມັທຍົມຫຼວງໃນທ້ອງຖິ່ນຂອງທ່ານຈະສືບຕໍ່ຄຸນ ຄ່າອັນສໍາຄັນຂອງການສຶກສາທີ່ໄດ້ເລີ້ມ ມາຈາກໂຮງ ຮຽນປະຖົມຂອງລູກທ່ານມາແລ້ວ. ມັນເປັນສິ່ງທີ່ຫຼີກ ລ່ຽງບໍ່ໄດ້ທີ່ບັນດານັກຮຽນຂອງ ພວກເຮົາຕ້ອງເຂົ້າໃຈ ເຖິງຄວາມສໍາຄັນຂອງ ຄວາມເຄົາຣົບ ຄວາມຮັບຜິດ ຊອບ ຄວາມເປັນອັນນຶ່ງອັນດຽວ ຄວາມດີເດັ່ນ ການມີຄວາມຄິດເປີດກວ້າງ ການຮ່ວມມືກັນ ການມີສ່ວນຮ່ວມ ຄວາມຫ່ວງໃຍ ຄວາມຍຸຕິທັມ ແລະ ຄວາມເປັນປະຊາທິປະໄຕ. ດ້ວຍວິທີທາງນີ້ ພວກເຮົາ ສາມາດຊ່ວຍລູກຂອງທ່ານໃຫ້:

- ມີຄວາມຮັກໃນການຮຽນ
- ສແວງຫາຄວາມດີເດັ່ນແລະມາຕຖານສູງ
- ພັທນາໃຫ້ມີຄວາມຫ່ວງໃຍ ແລະ ຄວາມເຄົາຣົບ ຕໍ່ພວກເຂົາເຈົ້າເອງ ແລະ ຕໍ່ຄົນອື່ນ
- ມີຄວາມພູມໃຈໃນວຽກຂອງພວກເຂົາ
- ສະແດງໃຫ້ເຫັນເຖິງການມີຄວາມຍຸຕິທັມ ແລະ ຄວາມທ່ຽງທັມໃນສັງຄົມ
- ມີຄວາມຮູ້ບຸນຄຸນໃນປວັດສາດຂອງອອັສເຕຣເລັຍ ແລະ ສັງຄົມນາງວັທນະທັມ
- ມີສ່ວນຮ່ວມຢ່າງແຂງຂັນໃນຖານະພົລເມືອງ.

### ບໍຣິການ ການອູ້ມຊູທີ່ດີທີ່ສຸດ

ນຶ່ງຂອງແກນຂອງຄວາມເຂັ້ມແຂງຂອງຣະບົບ ການສຶກສາໃນໂຮງຮຽນຫຼວງກໍຄື ມີເຄືອຂ່າຍຂອງ ຄົນເຮັດວຽກຮ່ວມກັນອັນກ້ວາງຂວາງເພື່ອໃຫ້ແນ່ໃຈ ວ່າເດັກທຸກໆຄົນປັບຕົວເຂົ້າກັບສະພາບແວດລ້ອມ ໃໝ່ໃນໂຮງຮຽນຂອງພວກເຂົາເຈົ້າໄດ້ເປັນຢ່າງດີ.

ມີບໍຣິການການອູ້ມຊູຢ່າງຫຼວງຫຼາຍທີ່ຈະຊ່ວຍໃຫ້ບັນດານັກຮຽນໃຫ້ຈັດການກັບການປ່ຽນແປງ ຂອງ ພວກເຂົາເຈົ້າເພື່ອໄປໂຮງຮຽນມັທຍົມ ບໍຣິການເຫຼົ່ານີ້ຣວມມີ:

- ຜູ້ໃຫ້ຄຳແນະນຳແກ່ນັກຮຽນ
- ຜູ້ໃຫ້ຄຳແນະນຳດ້ານວຽກງານ
- ທີມ ສວັດດີການຂອງນັກຮຽນ
- ຜູ້ໃຫ້ຄຳປຶກສາຫາລືຂອງໂຮງຮຽນທີ່ມີຄຸນວຸດທິ
- ນາຍຄູຜູ້ຊ່ວຍສຳລັບບັນດານັກຮຽນທີ່ມີຄວາມລຳບາກໃນການຮຽນ
- ນາຍຄູສອນພາສາອັງກິດເປັນພາສາທີສອງ
- ການຊ່ວຍເຫຼືອການສຶກສາຂອງຊາວ ອາບໍຣິຈິໂນລ
- ເຈົ້າໜ້າທີ່ໃຫ້ຂໍ້ມູນແລະພົວພັນກັບຊຸມຊົນ

## ຈຸດຣວມຢູ່ປີຮຽນລະຫວ່າງກາງ (Years 5-9)

ການຊ່ວຍນັກຮຽນທີ່ຢູ່ໃນປີຮຽນ"ລະຫວ່າງກາງ" ໄດ້ຊີ້ບົ່ງໃຫ້ຮູ້ວ່າແມ່ນບຸຣິມະສິດທົ່ວໄປໃນການສຶກສາຫຼວງໃນຣັຖNSW. ໂຮງຮຽນທັງຫຼາຍໄດ້ຈັດແຕ່ງໂຄງການທີ່ໄດ້ຮັບຄວາມສຳເຣັດສູງສຳລັບພວກປີຮຽນລະຫວ່າງກາງເພື່ອໃຫ້ແນ່ໃຈວ່າການຍ້າຍໄປສູ່ໂຮງຮຽນມັທຍົມຂອງນັກຮຽນແລະພໍ່ແມ່ນັ້ນ ເປັນໄປຢ່າງງ່າຍແລະສະດວກສະບາຍ ເທົ່າທີ່ຈະເປັນໄປໄດ້.

ຜົນການຮຽນທີ່ໄດ້ດີ ການສອນ ແລະ ການຮຽນ ທີ່ມີຄຸນນະພາບ ຫຼັກສູດການຮຽນທີ່ໃຫ້ໂອກາດຢ່າງ ຫຼວງຫຼາຍ ມີຄຸນຄ່າສູງ ມີບໍຣິການອູ້ມຊູທີ່ດີທີ່ສຸດ ແລະ ມີການເນັ້ນໜັກຢູ່ປີຮຽນລະຫວ່າງກາງ - ນີ້ແມ່ນ ເຫດຜົນຫົກຢ່າງເພື່ອຈົດຊື່ລູກທ່ານເຂົ້າຮຽນຢູ່ໃນໂຮງຮຽນມັທຍົມຫຼວງ.

## ບໍຣິການ ນາຍພາສາທາງໂທຣະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການ ຕິດຕໍ່ທ່ານຄູໃຫຍ່ຂອງທ່ານ ກະຣຸນາໂທຣະສັບຫາ ບໍຣິການ ນາຍພາສາທາງໂທຣະສັບ ຕາມເບີ 131 450 ແລ້ວຂໍເ
ອີ້ນາຍພາສາທີ່ປາກພາສາລາວ. ນາຍພາສາຈະໂທຫາທ່ານຄູໃຫຍ່ ແລະ ຈະຢູ່ກັບສາຍ ເພື່ອຊ່ວຍໃນການເວົ້າລົມຂອງທ່ານ. ທ່ານບໍ່ຕ້ອງຈ່າຍ ຄ່າໃດໆໃນບໍຣິການນີ້.

NSW Department of Education

GPO Box 33
Sydney NSW 2001
T 9561 8000

NSW GOVERNMENT | Education Public Schools